ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 33 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 15 ສິງຫາ 2016

ສຳນັກງານ ຄຄຊ
ເລກທີ 0810
ວັນທີ 16 AUG 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 01/08/2016 ຫາ 05/08/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດຂອງສະຫະລັດອອກມາບໍ່ດີ ເປັນຕົ້ນດັດຊະນີພາບລວມການບໍລິການ ແລະ ການຜະລິດນອກພາກອຸດສະຫະກຳໃນເດືອນ 7/2016 ຫຼຸດລົງ ເປັນ 55,5 ຈາກ 56,5 ໃນເດືອນຜ່ານມາ ແລະ ດັດຊະນີຝ່າຍຈັດຊື້ພາກການຜະລິດເດືອນ 7/2016 ຫຼຸດລົງເປັນ 52,6 ຈາກ 53,2 ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/07/2016 | ອາທິດນີ້ 05/08/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1105 | 1.1146 | -0.37% |
| ໂດລາ/ເຢນ | 103,56 | 100.93 | 2.61% |
| ໂດລາ/ບາດ | 34,810 | 34.820 | -0.03% |
| ໂດລາ/ເປໂຊ | 47,12 | 46.91 | 0.45% |
| ໂດລາ/ຣູເປີຍ | 13.097,00 | 13.125.00 | -0.21% |
| ໂດລາ/ໂດລາສິງກະໂປ | 1,3506 | 1.3405 | 0.75% |
| ໂດລາ/ຢວນ | 6,6510 | 6.6433 | 0.12% |

##### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 2,06% ຈາກ 43,61 ໂດລາ/ບາເຣວ ມາເປັນ 44,51 ໂດລາ/ບາເຣວ ພາຍຫຼັງບໍລິສັດ Genscape ຊຶ່ງເປັນບໍລິສັດທີ່ຕິດຕາມ ແລະ ລາຍງານສະພາບລາຄານ້ຳມັນ, ລາຍງານປະລິມານນ້ຳມັນທີ່ຍັງເຫຼືອ ໃນລັດ

ໂອກາໂຮມາ ເຫັນວ່າຫຼຸດລົງ 89.000 ບາເຣອ ມາເປັນ 64,1 ລ້ານບາເຣອ. ສຳລັບລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 2,16% 1.333,26 ມາເປັນ 1.362,12 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,03% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,03% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,27% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,15% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,67% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,95% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 2,15% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 2,11% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/07/2016 | | | ອາທິດນີ້ 05/08/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.086,15 | 8.116,99 | 8.096,23 | 8.084,91 | 8.115,00 | 8.098,58 | 0,02% | 0,02% | -0,03% |
| ບາດ | 232,77 | 234,24 | 233,94 | 232,78 | 234,44 | 233,32 | -0,01% | -0,09% | 0,27% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.113,27 | 8.139,40 | 8.126,33 | 8.109,75 | 8.138,40 | 8.124,08 | 0,04% | 0,01% | 0,03% |
| ບາດ | 233,07 | 233,88 | 233,47 | 233,43 | 234,23 | 233,83 | -0,15% | -0,15% | -0,15% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,34% | 0,28% | 0,37% | 0,31% | 0,29% | 0,31% | | | |
| ບາດ | 0,13% | -0,16% | -0,20% | 0,28% | -0,09% | 0,22% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 0,71% ທຽບໃສ່ວັນທີ 29/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 1,20%;
- ປະລິມານເງິນ M2 ຫຼຸດລົງ 0,26% ເມື່ອທຽບໃສ່ວັນທີ 29/07/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 9,45%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 01-05/08/2016) ເຫັນວ່າ ທທກ ຂາຍໂດລາສຸດທິ 46,09 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 15,94 ລ້ານໂດລາ ແລະ ຂາຍໂດລາໄດ້ 62,03 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 19,10 ລ້ານບາດ (ໃນນີ້ ຊື້ບາດໄດ້ 87,25 ລ້ານບາດ ແລະ ຂາຍບາດໄດ້ 106,35 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 14,07% ແລະ ເພີ່ມຂຶ້ນ 54,14% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາແມ່ນບໍ່ມີການຊື້-ຂາຍ ແຕ່ເງິນບາດມີຈຳນວນ 0,03 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 1,72 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 5,52 ລ້ານບາດ;

---
[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ບໍ່ມີການຊື້-ຂາຍເງິນໂດລາ ແຕ່ມີການຊື້ເງິນບາດຈຳນວນ 0,01 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 25-28/07/2016 | | ອາທິດທີ 01-05/08/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **8,00** | **73,82** | **15,94** | **87,25** | **.18,19%** | **8,00** |
| - ທ/ຄທຸລະກິດລັດ | 3,14 | 17,20 | 4,45 | 19,44 | 13,03% | 3,14 |
| - ທ/ຄທຸລະກິດອື່ນໆ | 4,86 | 56,62 | 11,49 | 67,81 | 19,76% | 4,86 |
| **2. ການຂາຍເງິນຕາຕ່າງປະເທດ** | **46,13** | **95,90** | **62,03** | **106,35** | **10,90%** | **46,13** |
| - ທ/ຄທຸລະກິດລັດ | 5,04 | 26,38 | 5,51 | 20,63 | -21,80% | 5,04 |
| - ທ/ຄທຸລະກິດອື່ນໆ | 41,09 | 69,52 | 56,51 | 85,72 | 23,31% | 41,09 |
| **ຊື້-ຂາຍສຸດທິ ທທກ** | **-38,13** | **-22,08** | **-46,09** | **-19,10** | **-13,48%** | **-38,13** |
| ຜົດດ່ຽງ ຊື້-ຂາຍ | -476,29% | -29,91% | -289,09% | -21,90% | -26,80% | -476,29% |
| ມູນຄ່າການຊື້-ຂາຍ | **54,14** | **169,72** | **77,97** | **193,60** | **14,07%** | **54,14** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-0,77** | **-11,02** | **-1,72** | **-5,52** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,77 | 11,02 | 1,72 | 5,52 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **2,01** | **4,96** | **0,00** | **0,03** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,00** | **0,92** | **0,00** | **0,01** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,93 | 0,00 | 0,01 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ ໃນເດືອນ 08/2016 ຢູ່ໃນລະດັບ 2,15% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,18% ຈາກ 1,97% ໃນເດືອນ 07/2016.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 45,5 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 59,1% ທຽບໃສ່ອາທິດຜ່ານມາ.

**III. ວຽກງານວິຊາສະເພາະ**

**1. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 912 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 11,90% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 530,13 ຕື້ກີບ ເພີ່ມຂຶ້ນ 78,48% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (29/07-04/08/2016) ມີຈຳນວນ 1.772 ຄັ້ງ ໂດຍມີມູນຄ່າ 415,04 ຕື້ກີບ ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 485 ຄັ້ງ.

2. **<u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.013,02 ຈຸດ ຫຼຸດລົງ 0,12% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 107.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 517,68 ລ້ານກີບ ຫຼຸດລົງ 24,52% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 42,23% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.706 ກີບ/ຮຸ້ນ ຫຼຸດລົງ 94 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 33.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 156,70 ລ້ານກີບ ເພີ່ມຂຶ້ນ 341,17% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 17,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.031 ກີບ/ຮຸ້ນ ຫຼຸດລົງ 302 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 67.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 340,12 ລ້ານກີບ ຫຼຸດລົງ 47,64% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 58,81% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,84%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.300 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ໃນອາທິດນີ້ ບໍ່ມີການຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.550 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,02 ລ້ານກີບ ເພີ່ມຂຶ້ນ 30,77% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສູວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.100 ກີບ/ຮຸ້ນ ເພີ່ມຂຶ້ນ 100 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 19,84 ລ້ານກີບ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[6].

3. **<u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>**

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດການ: ❶ເຂົ້າຮ່ວມປະຊຸມຜູ້ວ່າການທະນາຄານກາງ CLMV ທີ່ນະຄອນຫຼວງຢາງກຸ້ງ ປະເທດມຽນມາ, ❷ເປັນປະທານຊີ້ນໍາກອງປະຊຸມຄົ້ນຄວ້າຮ່າງປະມວນກົດໝາຍອາຍາ ທີ່ ທຫລ, ❸ເຂົ້າຮ່ວມເປັນປະທານໃນພິທີປະກາດການຈັດຕັ້ງຂັ້ນຄະນະກໍາມະ ຂອງ ສຄຄຊ ທີ່ ທຫລ, ❹ເຂົ້າຮ່ວມປະຊຸມຜົນການໄປເຂົ້າຮ່ວມປະຊຸມຜູ້ວ່າການ CLMV ທີ່ຫ້ອງວ່າການສໍານັກງານນາຍົກ, ❺ເປັນປະທານ ແລະ ເຂົ້າຮ່ວມກອງປະຊຸມເປີດກວ້າງຄະນະພັກ ທຫລ ຄັ້ງທີ IV ສະໄໝສາມັນ ທີ III ທີ່ ທຫລ, ❻ເຂົ້າຮ່ວມກອງປະຊຸມທະນາຄານສົ່ງເສີມກະສິກໍາທົ່ວປະເທດ ທີ່ທະນາຄານສົ່ງເສີມກະສິກໍາ, ❼ເຂົ້າຮ່ວມກອງປະຊຸມທ່ານນາຍົກ-ຮອງນາຍົກປະຈໍາເດືອນ ສິງຫາ 2016 ທີ່ຫ້ອງການສໍານັກງານນາຍົກລັດຖະມົນຕີ, ❽ເຂົ້າຮ່ວມກອງປະຊຸມພົບປະຄະນະຜູ້ແທນຈາກສະພາແຫ່ງຊາດ ທີ່ຫໍວັດທະນະທໍາ, ❾ເຂົ້າຮ່ວມພິທີເປີດກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ ທີ່ໂຮງແຮມດອນຈັນ, ❿ເປັນປະທານໂອ້ລົມໃນພິທີຮັບມະຫາຊົນກ້າວໜ້າເປັນສະມະຊິກພັກສໍາຮອງຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ ທຄຕລ;

---

ລາຄາສະເລ່ຍ ແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຈັດ: ❶ກອງປະຊຸມເຜີຍແຜ່ວຽກງານຂອງກອງທຶນ FIF ໃຫ້ແກ່ບັນດາສະຖາບັນການເງິນຈຸລະພາກ, ສສງ ແລະ ບໍລິສັດເຊົ່າສິນເຊື່ອ ທີ່ ແຂວງສະຫວັນນະເຂດ, ພ້ອມກັບລົງຢ້ຽມຢາມເກັບກຳສະພາບ ແລະ ຂໍ້ມູນຂອງພະນັກງານ ແລະ ກຳມະກອນ ຢູ່ເຂດເສດຖະກິດພິເສດ, ❷ສຳມະນາທົບທວນ ກ່ຽວກັບລະບຽບການທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ, ຜູ້ຊ່ວຍນາຍໜ້າ, ຄະນະອຳນວຍການຂອງບໍລິສັດຫຼັກຊັບ ແລະ ຫ້ອງການຜູ້ຕາງໜ້າບໍລິສັດຫຼັກຊັບຕ່າງປະເທດ ຄັ້ງທີ I ປະຈຳປີ 2016 ທີ່ ສຳນັກງານ ຄຄຊ, ❸ກອງປະຊຸມສຳມະນາ ໃນຫົວຂໍ້ "ການຂຽນໜັງສືຊວນຊື້ໃນມູນມອງຂອງສຳນັກງານ ຄຄຊ" ທີ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ; ❹ກອງປະຊຸມລະ ດົມຄຳເຫັນຈາກຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຕໍ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຕະຫຼາດທຶນ ໄລຍະ 5 ປີ (2011-2015) ແລະ ແຜນການ 4 ປີຕໍ່ໜ້າ (2016-2020) ທີ່ ສຳນັກງານ ຄຄຊ;

- ສຳເລັດການເຂົ້າຮ່ວມ: ❶ສຳມະນາໃນຫົວຂໍ້: "Due Deligence checklist for sumitting filing to Lao Securities ທີ່ຕະຫຼາດຫຼັກຊັບລາວ, ❷ກອງປະຊຸມສຳມະນາ ໃນຫົວຂໍ້: "Improvement of Banking Supervision" ທີ່ ປະເທດຍີ່ປຸ່ນ; ❸ກອງປະຊຸມສຳມະນາ ໃນຫົວຂໍ້: "Operational Risk and Technology Risk" ທີ່ປະເທດ ມາເລເຊຍ; ❹ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VIII ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ I ຢູ່ທີ່ຫໍວັດທະນະທຳແຫ່ງຊາດ, ❺ກອງປະຊຸມປຶກສາຫາລືກ່ຽວກັບວຽກງານວິຊາສະເພາະຮ່ວມກັບທະນາຄານກະສິກອນໄທ ແລະ ກຶມຄຸ້ມຄອງທະນາຄານທຸລະກິດ ທີ່ ທຫລ, ❻ກອງປະຊຸມ ໃນຫົວຂໍ້: "ການປອມແປງທະນາບັດ (ເງິນກີບ)" ທີ່ ທຫລ, ❼ກອງປະຊຸມລັດຖະມົນຕີເສດຖະກິດອາຊຽນ ຄັ້ງທີ 48 ແລະ ກອງປະຊຸມປິ່ນອ້ອມອື່ນໆ ທີ່ ໂຮງແຮມດອນຈັນ ພາເລສ;

- ສຳເລັດການຄົ້ນຄວ້າ ແລະ ຮ່າງເນື້ອໃນໃຫ້ຄະນະນຳ ທຫລ ໃນການເຂົ້າຮ່ວມກອງປະຊຸມພົບປະບັນດາຜູ້ວ່າການທະນາຄານກາງຂອງ CLMV ທີ່ ປະເທດມຽນມ້າ;

- ສຳເລັດການອອກແບບໂລໂກ້ ແລະ ບົດນຳສະເໜີໃນກອງປະຊຸມຂອງ ສຳນັກງານຂໍ້ມູນຕ້ານການຟອກເງິນ ທີ່ ທຫລ.

3. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ກະກຽມການ: ❶ເດີນທາງໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ທີ່ ປະເທດລັດເຊຍ, ❷ເປັນປະທານກອງປະຊຸມສ່ອງແສງສາຍພັກປະຈຳເດືອນ ກໍລະກົດ 2016 ທີ່ ທຫລ, ❸ເປັນປະທານກອງປະຊຸມການມອບຂໍ້ວທ່າງອນ ກັບ ສູນເກັບຊື້ໜີ້ ທີ່ ທຫລ, ❹ເປັນປະທານກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ກໍລະກົດ 2016 ທີ່ ທຫລ, ❺ເປັນປະທານກອງປະຊຸມຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກ ທີ່ ທຫລ, ❻ຮັບການເຂົ້າຢ້ຽມຂໍ່ານັບຈາກສະມະຄົມທະນາຄານທຸລະກິດໄທ ທີ່ ທຫລ;

- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;

- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ;

- ສືບຕໍ່ສ້າງປື້ມຄູ່ມືຖອດຖອນບົດຮຽນການເປັນປະທານ ແລະ ເຈົ້າພາບກອງປະຊຸມຂັ້ນສູງວຽກງານອາຊຽນ ແລະ ອາຊຽນ+3 ຂອງຂະແໜງການທະນາຄານ ທີ່ນະຄອນຫຼວງວຽງຈັນ;

- ກະກຽມ: ❶ດ້ານເນື້ອໃນ ໃນການເປັນປະທານຮ່ວມກັບ ສປ ຈີນ ໃນກອງປະຊຸມລະດັບໜ່ວຍງານຂອງ ອາຊຽນ+3 ທີ່ເມືອງກຸ້ຍລິນ, ແຂວງກວາງຊີ ສປ ຈີນ, ❷ເຂົ້າຮ່ວມກອງປະຊຸມສຸດຍອດລະດັບພາກພື້ນ ເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄັ້ງທີ II ທີ່ປະເທດອິນໂດເນເຊຍ;

- ສືບຕໍ່: ❶ກະກຽມເປີດກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈຳປີ 2016, ❷ ກະກຽມເປີດກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ II ປະຈຳປີ 2016.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສກັນ ຈັນທະວົງ